ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນຍຸດທະສາດ 5 ປີ

## ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ

ກຸມພາ 2007

# ຄຳນຳຂອງປະທານສະພາບໍລິຫານ ກອງທຶນປົກປັກ ຮັກສາສິ່ງແວດລ້ອມ

ລັດຖະບານ ສປປລາວ ເວລາໃດກໍໃຫ້ຄວາມສຳຄັນຕໍ່ວຽກງານສິ່ງແວດລ້ອມ, ຖືເອົາການພັດທະນາເສດຖະກິດ ຕິດແໜ້ນກັບການພັດທະນາດ້ານສັງຄົມແລະປົກປັກຮັກສາສິ່ງແວດລ້ອມ, ການພັດທະນາທີ່ຮັບປະກັນຄວາມຍືນຍົງ, ນຳໃຊ້ທ່າແຮງດ້ານຊັບພະຍາກອນທຳມະຊາດຢ່າງສົມສ່ວນ, ມີປະສິດທິຜົນແລະທັງຮັບປະກັນບໍ່ໃຫ້ບົກແຫ້ງ.

ໂດຍເຫັນໄດ້ ຄວາມສຳຄັນດັ່ງກ່າວຕະຫຼອດໄລຍະທີ່ຜ່ານມາ ລັດຖະບານ ສປປລາວ ໄດ້ສ້າງທຸກເງື່ອນໄຂເພື່ອເຮັດໃຫ້ການພັດທະນາເສດຖະກິດດຸ່ນດ່ຽງ ກັບການປົກປັກຮັກສາຊັບພະຍາກອນທຳມະຊາດຂອງປະເທດ. ການອອກກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ໃນປີ 1999, ຊຶ່ງເປັນຂົດໝາຍທີ່ສຳຄັນ ໃນການວາງກອບສິ່ງແວດລ້ອມແລະສັງຄົມໃຫ້ຮອບດ້ານ ສຳລັບປົກປັກຮັກສາແລະຄຸ້ມຄອງສິ່ງແວດລ້ອມຂອງປະເທດ. ຢ່າງໃດກໍດີ, ໃນປັດຈຸບັນ, ສປປລາວ ກໍກຳລັງປະເຊີນກັບສິ່ງທ້າທາຍຫຼາຍຢ່າງໃນການຄຸ້ມຄອງການພັດທະນາທີ່ວ່ອງໄວ ໄປພ້ອມກັບການປົກປັກຮັກສາສິ່ງແວດລ້ອມແລະຫຼຸດຜ່ອນຄວາມທຸກຍາກ.

ສິ່ງທ້າທາຍຕົ້ນຕໍ ສຳລັບ ສປປລາວ ແມ່ນການສະໜອງທຶນຮອນໃຫ້ແກ່ແຜນການຕ່າງໆທີ່ພາກສ່ວນຕ່າງໆສ້າງຂຶ້ນ (ໜ່ວຍງານຂອງລັດທັງຢູ່ສູນກາງແລະທ້ອງຖິ່ນ, ຊຸມຊົນ) ເພື່ອປົກປັກຮັກສາແລະຄຸ້ມຄອງຊັບພະຍາກອນຂອງຕົນໃຫ້ຍືນຍົງ. ເມື່ອເປັນແນວນີ້, ການສ້າງຕັ້ງກອງທຶນປົກປັກຮັກສາສິ່ງແວດລ້ອມ ໃນປີ 2005 ໃຫ້ເປັນອົງການໜຶ່ງທີ່ເອກກະລາດ ທາງດ້ານການເງິນແລະການບໍລິຫານ ເຄື່ອນໄຫວຕາມລະບຽບກົດໝາຍຂອງ ສປປລາວ, ໄດ້ເປັນອີກບາດກ້າວໜຶ່ງທີ່ສຳຄັນ

ຂອງລັດຖະບານ ສປປລາວ ໃນການຈັດຕັ້ງປະຕິບັດນະໂຍບາຍສິ່ງແວດລ້ອມແຫ່ງຊາດ.

ຈາກນັ້ນ, ສະພາບໍລິຫານ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ຈຶ່ງໄດ້ຮ່າງແຜນຍຸດທະສາດຂອງຕົນອອກ ໃຫ້ເປັນກອບທີ່ມີລັກສະນະຮອບດ້ານອັນທຳອິດ ເພື່ອສືບຕໍ່ພັດທະນາແລະມີກົນໄກສະໜອງທຶນຮອນ ໃຫ້ແກ່ການຈັດຕັ້ງປະເຕີບັດນະໂຍບາຍຂະແໜງການຂອງລັດ. ໂດຍສະເພາະ, ແມ່ນການສະໜອງທຶນຮອນໃຫ້ແກ່ກິດຈະການ ທີ່ຈະສ້າງຄວາມເຂັ້ມແຂງ ໃຫ້ແກ່ການຄຸ້ມຄອງສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ການອະນຸລັກຊີວະນາໆພັນແລະການພັດທະນາຊຸມຊົນຢູ່ໃນ ສປປລາວ ເພື່ອປະກອບສ່ວນເຂົ້າໃນການພັດທະນາປະເທດໃຫ້ຍືນຍົງ ແລະ ການຫຼຸດຜ່ອນຄວາມທຸກຍາກແລະປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ.

ນອກຈາກນີ້, ສະພາບໍລິຫານ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ຍົກໃຫ້ເຫັນການຕັດສິນໃຈ ທີ່ຢາກເປັນອົງການທີ່ຮ່ວມງານກັບທຸກພາກສ່ວນໃນການສະໜອງທຶນຮອນໃຫ້ແກ່ວຽກປົກປັກຮັກສາສິ່ງແວດລ້ອມ ເພື່ອຈະໄດ້ນຳເອົາຫຼັກການພື້ນຖານຂອງການດຳເນີນກອງທຶນຈຳນວນໜຶ່ງ ເຂົ້າໃນກິດຈະການຕ່າງໆຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນ: ***ຄວາມໂປ່ງໃສ, ປະສິດທິພາບ, ປະສິດທິຜົນ, ຄວາມຍືນຍົງ*** ແລະ ***ການຮ່ວມງານນຳກັນ***.

ໃນການຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກ່າວ, ສະພາບໍລິຫານຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ຫວັງວ່າຈະໄດ້ຮັບການຮ່ວມມືແລະສະໜັບສະໜູນຢ່າງດີ ຈາກທຸກພາກສ່ວນ ເພື່ອເຮັດໃຫ້ບັນລຸໄດ້ຈຸດປະສົງຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ກໍຄືຂອງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ.

ສຸດທ້າຍ, ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍນຳທຸກຄົນ ແລະທຸກພາກສ່ວນ ທີ່ໄດ້ປະກອບສ່ວນໃນການຮ່າງແຜນຍຸດທະສາດທີ່ສຳຄັນສະບັບນີ້. ພ້ອມນີ້ ກໍຂໍຂອບໃຈນຳທຸກພາກສ່ວນທີ່ໄດ້ຕັດສິນໃຈ ຈະຮ່ວມງານນຳກັນ ຈັດຕັ້ງປະຕິບັດແຜນດັ່ງກ່າວ ແລະ ຈະປະກອບສ່ວນໃນການສ້າງກົນໄກການເງິນແບບຍືນຍົງສຳລັບການປົກປັກຮັກສາສິ່ງແວດລ້ອມ ຢູ່ ສປປລາວ.

ຮອງນາຍົກລັດຖະມົນຕີ

ປະທານສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ



ອາຊາງ ລາວລີ

## *ສາລະບານ*

*ຄຳນຳຂອງປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ*......................................................................*i*

*ສາລະບານ*....................................................................*v*

*ບົດສະຫຼຸບຫຍໍ້*..................................................................*vii*

*1. ພາກສະເໜີ*..................................................................*1*

*2. ກອງທຶນປົກປັກຮັກສາສິ່ງແວດລ້ອມ*....................................*3*

2.1. ການສ້າງ ກປສ ເປັນກົນໄກສະໜອງທຶນ ............................. 3

2.2. ກອງທຶນຍ່ອຍ ..................................................................... 4

2.2. ໂຄງຮ່າງການຈັດຕັ້ງຂອງ ກປສ ........................................... 4

3. ວິໄສທັດຂອງ ກປສ ................................................................ 6

3. ວິໄສທັດຂອງ ກປສ ................................................................ 7

3.1. ວິໄສທັດໄລຍະຍາວຂອງ ກປສ............................................ 7

3.2. ແຜນຍຸດທະສາດໄລຍະກາງຂອງ ກປສ (2006-2010)........... 9

*4. ຍຸດທະສາດຈັດຕັ້ງປະຕິບັດ*...............................................*11*

4.1. ພັດທະນາການຮ່ວມງານຍຸດທະສາດ................................... 11

4.2. ສ້າງຂັ້ນຕອນດຳເນີນງານແບບຖືກຕ້ອງແລະໂປ່ງໃສ ............. 14

4.3. ສ້າງເຄື່ອງມືສະໜອງທຶນທີ່ເໝາະສົມ .................................. 15

4.4. ສ້າງກອງທຶນຍ່ອຍຂຶ້ນແລະດຳເນີນງານ................................ 16

4.5. ຂັ້ນຕອນປຶກສາຫາລືແລະຕິດຕາມກວດກາທີ່ເໝາະສົມ......... 22

*5. ແຜນການຈັດຕັ້ງແລະການເງິນ..........................................26*

5.1. ແຜນປະກອບພະນັກງານ .................................................. 26

5.2. ແຜນງົບປະມານທີ່ຄາດໄວ້................................................. 27

## ຮູບ


| | |
|---|---|
| ຮູບ 1. ໂຄງຮ່າງການຈັດຕັ້ງກອງທຶນປົກປັກຮັກສາສິ່ງແວດລ້ອມ | 5 |
| ຮູບ 2. ຮູບກະແສໝູນວຽນຂອງທຶນຮອນ | 33 |


## ຕາຕະລາງ


| | |
|---|---|
| ຕາຕະລາງ 1 ກອງທຶນຍ່ອຍທີ່ຄາດວ່າຈະສ້າງຂຶ້ນຕາມແຜນ ຍຸດທະສາດ | 18 |
| ຕາຕະລາງ 2. ແຜນງົບປະມານທີ່ຄາດໄວ້ສຳລັບ 5 ປີ 2006-2010 | 29 |

# ບົດສະຫຼຸບຫຍໍ້

ແຜນຍຸດທະສາດ 5 ປີ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແນໃສ່ຍົກໃຫ້ເຫັນການສະໜັບ ສະໜູນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ຕໍ່ຍຸດທະສາດສິ່ງແວດລ້ອມແຫ່ງຊາດຮອດປີ 2020 ແລະ ແຜນດຳເນີນງານສິ່ງແວດລ້ອມສຳລັບ 2006-2010, ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນ, ຍຸດທະສາດ ແລະ ແຜນດຳເນີນງານປ່າໄມ້ ແລະແຜນຍຸດທະສາດອື່ນໆ ທີ່ລັດຖະບານ ສປປລາວ ໄດ້ຮັບຮອງເອົາ.

ແຜນຍຸດທະສາດ 5 ປີຍັງແນໃສ່ສ້າງຫຼັກການເຄື່ອນໄຫວຂອງທຶນໃຫ້ຖືກຕ້ອງແລະໂປ່ງໃສ ເພື່ອສະໜອງທຶນຮອນໃຫ້ໂຄງການຕ່າງໆຢູ່ ສປປລາວ ຢ່າງມີປະສິດທິພາບແລະມີຜົນສັກສິດ.

ການໃຫ້ການສະໜັບສະໜູນດ້ານການເງິນ ແກ່ກິດຈະການຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແມ່ນອີງໃສ່ຫຼັກການດຳເນີນງານດັ່ງຕໍ່ໄປນີ້:

- ການເປັນເຈົ້າແລະຄວາມຮັບຜິດຊອບ
- ຄວາມໂປ່ງໃສແລະປະສິດທິພາບ
- ການຈັດຕັ້ງປະຕິບັດນະໂຍບາຍຂອງລັດໃຫ້ມີປະສິດທິຜົນ
- ບັນລຸຜົນທີ່ສາມາດວັດແທກໄດ້
- ຄວາມຍືນຍົງ.

ສຳລັບໄລຍະກາງ (ຮອດປີ 2010), ແຜນຍຸດທະສາດ 5 ປີ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມສະບັບນີ້ ແມ່ນສຸມໃສ່ ເພື່ອຮັບປະກັນກິດຈະການດັ່ງຕໍ່ໄປນີ້:

- ພັດທະນາການຮ່ວມງານຍຸດທະສາດ ກັບອົງການຕ່າງໆຂອງລັດ, ຜູ້ໃຫ້ທຶນແລະພາກສ່ວນເອກກະຊົນ ເພື່ອແນະນຳແລະໃຫ້ການສະໜັບສະໜູນ;
- ສະແດງໃຫ້ເຫັນການຄຸ້ມຄອງທີ່ດີທາງດ້ານການເງິນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ເພື່ອໃຫ້ອົງການລັດ ແລະອົງການໃຫ້ທຶນ ມີຄວາມເຊື່ອໝັ້ນນຳກອງທຶນປົກປັກຮັກສາສິ່ງແວດລ້ອມ;
- ສ້າງເຄື່ອງມືສະໜອງທຶນຮອນ ໃຫ້ທຸກພາກສ່ວນທີ່ມີສ່ວນຮ່ວມ ແບບປະສົມປະສານ;
- ສະໜັບສະໜູນວຽກບູລິມະສິດໃນການປົກປັກຮັກສາສິ່ງແວດລ້ອມຢູ່ ສປປລາວ ໂດຍສ້າງ 5 ກອງທຶນຍ່ອຍຂຶ້ນ;
- ສ້າງລະບົບຕິດຕາມກວດກາແລະຊີ້ນຳນຳພາວຽກງານ ທີ່ເໝາະສົມ ເພື່ອຮັບປະກັນວ່າມັນຖືກຕ້ອງຕາມຫຼັກການດຳເນີນງານຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ.

ຕໍ່ຈຸດປະສົງດັ່ງກ່າວ, ກອງທຶນປົກປັກຮັກສາສິ່ງແວດລ້ອມ ຄາດວ່າມີແຜນຮອບດ້ານ ເພື່ອສະໜອງທຶນໃຫ້ແກ່ການຄຸ້ມຄອງຊັບພະຍາກອນທຳມະຊາດ (ທີ່ດິນ, ນ້ຳ, ຊີວະນາໆພັນແລະປ່າໄມ້), ການຄວບຄຸມມົນລະພິດ ແລະ ການພັດທະນາຊຸມຊົນ ເພື່ອເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມໄດ້ຮັບຜົນສູງຂຶ້ນ.

## 1. ພາກສະເຫນີ

ສປປລາວ ມີຊັບພະຍາກອນທຳມະຊາດຫຼາຍຢ່າງແລະມີສິ່ງແວດລ້ອມທີ່ອຸດົມສົມບູນ ເຖິງແມ່ນຍັງຈັດເປັນປະເທດພັດທະນາຫຼ້າຊ້າ. ເນື້ອເຄິ່ງໜຶ່ງຂອງປະເທດຍັງປົກຄຸມດ້ວຍປ່າໄມ້, ມີຊັບພະຍາກອນນ້ຳມະຫາສານ ແລະ ຄວາມໜາແໜ້ນຂອງພົນລະເມືອງຍັງຕ່ຳ, ສປປລາວ ຈຶ່ງມີພືດແລະສັດຫຼາຍຊະນິດ ທີ່ພົບເຫັນໃນບໍ່ເທົ່າໃດປະເທດໃນພາກພື້ນນີ້. ການພັດທະນາເສດຖະກິດກໍຍັງຂຶ້ນກັບຊັບພະຍາກອນທຳມະຊາດຢ່າງຫຼວງຫຼາຍ ເປັນຕົ້ນ ໄຟຟ້ານ້ຳຕົກ, ປ່າໄມ້ແລະບໍ່ແຮ່.

ໃນປັດຈຸບັນ ສປປລາວ ໄດ້ປະເຊີນກັບສິ່ງທ້າທາຍທາງດ້ານສິ່ງແວດລ້ອມຫຼາຍຢ່າງ. ການຂຸດຄົ້ນຊັບພະຍາກອນແບບບໍ່ຍືນຍົງ ໄດ້ເຮັດໃຫ້ທີ່ດິນແລະຖິ່ນອາໄສ ຊຸດໂຊມລົງ. ການຊຸດໂຊມດັ່ງກ່າວ ຕື່ມໃສ່ກັບຄຸນນະພາບອາກາດແລະນ້ຳຫຼຸດລົງ ກໍໄດ້ສົ່ງຜົນກະທົບຕໍ່ກຸ່ມຄົນທຸກຍາກຢ່າງຫຼວງຫຼາຍ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ລັດຖະບານໄດ້ສ້າງ ຄະນະກຳມະການສິ່ງແວດລ້ອມແຫ່ງຊາດຂຶ້ນ ໂດຍອອກດຳລັດວ່າດ້ວຍການຈັດຕັ້ງແລະເຄື່ອນໄຫວ ຂອງຄະນະກຳມະການສິ່ງແວດລ້ອມແຫ່ງຊາດ (ເລກທີ 9/ນຍ ລົງວັນທີ 2/2/2002) ເພື່ອໃຫ້ຄຳປຶກສາແກ່ລັດຖະບານໃນການຄຸ້ມຄອງ, ປົກປັກຮັກສາແລະກວດກາວຽກງານສິ່ງແວດລ້ອມ ແລະ ຄຽງຄູ່ກັນນີ້ ກໍປະສານກັບຂະແໜງການແລະທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດແຜນຄຸ້ມຄອງແລະກວດກາສິ່ງແວດລ້ອມ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ.

ໃນດ້ານນະໂຍບາຍ, ໃນປີ 2004, ລັດຖະບານໄດ້ຮັບຮອງເອົາຍຸດທະສາດສິ່ງແວດລ້ອມແຫ່ງຊາດ ແລະແຜນດຳເນີນງານແຕ່ 2006-2010 ຊຶ່ງມີຈຸດສຸມໃຫຍ່ໆ ແນໃສ່ຄຸ້ມຄອງຊັບພະຍາກອນທຳມະຊາດ, ຄວບຄຸມມົນລະພິດຈາກການພັດທະນາໂຄງລ່າງ ແລະ ການພັດທະນາຄວາມສາມາດໃນດ້ານສິ່ງແວດລ້ອມ. ໃນປີນີ້, ລັດຖະບານ ໄດ້ກຳນົດແຜນງານບູລິມະສິດສຳລັບການພັດທະນາເສດຖະກິດ ໃນໄລຍະ 2006-2010 ທີ່ຈະສ້າງເງື່ອນໄຂອຳນວຍໃຫ້ເສດຖະກິດ ຂະຫຍາຍຕົວໃນລະດັບຕໍ່ເນື່ອງ 7,5% ຂຶ້ນໄປໃນແຕ່ລະປີ, ຊຶ່ງໃນນັ້ນ ໄດ້ກຳນົດຫຼາຍໂຄງການທີ່ແນໃສ່ປົກປັກຮັກສາສິ່ງແວດລ້ອມ.

ເພື່ອຈັດຕັ້ງປະຕິບັດນະໂຍບາຍເຫຼົ່ານີ້, ລັດຖະບານໄດ້ສ້າງກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ຂຶ້ນ, ໂດຍອອກດຳລັດວ່າດ້ວຍ ກປສ (ເລກທີ 144 ລົງວັນທີ 6/6/05) ເພື່ອສະໜອງທຶນຮອນໃຫ້ແກ່ບັນດາກິດຈະການ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ການອະນຸລັກຊີວະນາໆພັນແລະການພັດທະນາຊຸມຊົນຢູ່ໃນ ສປປລາວ.

## 2. ກອງທຶນປົກປັກຮັກສາສິ່ງແວດລ້ອມ

### 2.1. ການສ້າງ ກປສ ເປັນກົນໄກສະໜອງທຶນ

ກປສ ຈະສະໜອງທຶນຮອນໃຫ້ແກ່ໂຄງການຂອງບຸກຄົນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງ ຂອງລັດ ຫຼື ສັງຄົມ ດ້ວຍຮູບແບບໃຫ້ການຊ່ວຍເຫຼືອລ້າ, ເງິນກູ້ອັດຕາ ດອກເບ້ຍຕໍ່າ, ການຖົມຊົມອັດຕາດອກເບ້ຍ ຫຼື ເປັນການສະໜອງທຶນແບບປະສົມປະສານກັນ ໂດຍຖືກກັບຈຸດປະສົງຂອງ ກປສ.

ຕາມພາລະບົດບາດແລ້ວ, ກປສ ຈະສະໜອງທຶນຮອນໃຫ້ແກ່ໂຄງການ ທີ່ກວມເອົາຂະແໜງການແລະແຂວງຕ່າງໆ ແລະ ໂຄງການທີ່ເປັນບູລິມະສິດສຳລັບສິ່ງແວດລ້ອມ. ໂຄງການຂອງ ກປສ ຈະມີການເຂົ້າຮ່ວມຂອງອົງການລັດ, ອົງການຈັດຕັ້ງສັງຄົມແລະຂອງທ້ອງຖິ່ນ ຊຶ່ງຈະຮັບປະກັນໃຫ້ການແກ້ໄຂບັນຫາສິ່ງແວດລ້ອມມີລັກສະນະຄົບຊຸດ ແຕ່ການສ້າງ/ປັບປຸງນະໂຍບາຍ ຈົນຮອດການຈັດຕັ້ງຕົວຈິງໃນຮາກຖານ.

ອີງຕາມກົດໝາຍປົກປັກຮັກສາສິ່ງແວດລ້ອມ, ກປສ ຈະບໍ່ສະໜັບສະໜູນ ການຫຼຸດຜ່ອນຜົນກະທົບຂອງໂຄງການພັດທະນາ ທີ່ຕ້ອງໄດ້ຮັບຜິດຊອບແກ້ໄຂບັນຫາສິ່ງແວດລ້ອມແລະສັງຄົມ ທີ່ໂຄງການນັ້ນສ້າງຂຶ້ນ. ເຖິງຈະເປັນກອງທຶນສິ່ງແວດລ້ອມອັນດຽວຢູ່ ສປປລາວ, ກປສ ບໍ່ໄດ້ຄາດວ່າ ຈະຮັບຜິດຊອບຄຸ້ມຄອງແຫຼ່ງທຶນທີ່ພົວພັນກັບການຄຸ້ມຄອງສິ່ງແວດລ້ອມຢູ່ ສປປລາວ ທັງໝົດ.

## 2.2. ກອງທຶນຍ່ອຍ

ທຶນຮອນຈາກ ກປສ ຈະໄດ້ປ່ອຍອອກຕາມແຕ່ລະກອງທຶນຍ່ອຍ ຊຶ່ງມີຈຸດປະສົງ, ຄາດໝາຍແລະຂັ້ນຕອນຈັດຕັ້ງປະຕິບັດສະເພາະ, ຖ້າຈຳເປັນ. ກອງທຶນຍ່ອຍ ຈະໄດ້ສ້າງຂຶ້ນດ້ວຍການຊ່ວຍເຫຼືອສະໜັບສະໜູນທາງດ້ານທຶນຮອນ ຈາກງົບປະມານຂອງ ກປສ ຫຼື ຂອງຜູ້ໃຫ້ທຶນຕ່າງປະເທດ.

ໃນເວລາສ້າງຕັ້ງຂຶ້ນທຳອິດ, ກປສ ໄດ້ຮັບທຶນຊ່ວຍເຫຼືອລ້າຈາກທະນາຄານໂລກ 4 ລ້ານໂດລາ (ພ້ອມທັງມີ ການປະກອບສ່ວນຂອງລັດຖະບານໃນຈຳນວນ 0,8ລ້ານໂດລາ) ເພື່ອສ້າງກອງທຶນຍ່ອຍຂຶ້ນສອງກອງ ແລະ ຊ່ວຍຫ້ອງການ ກປສ ເພື່ອເຮັດໃຫ້ມັນເຄື່ອນໄຫວໄດ້ຢ່າງເຕັມສ່ວນ.

## 2.2. ໂຄງຮ່າງການຈັດຕັ້ງຂອງ ກປສ

ຄືດັ່ງທີ່ໄດ້ລະບຸໄວ້ ຢູ່ໃນດຳລັດແລະລະບຽບການຄຸ້ມຄອງ ກປສ, ກປສ ປະກອບດ້ວຍສະພາບໍລິຫານແລະຫ້ອງການບໍລິຫານຂອງກອງທຶນ ຊຶ່ງມີໜ່ວຍງານທີ່ສ້າງຂຶ້ນສະເພາະເພື່ອເຮັດວຽກຄຸ້ມຄອງກອງທຶນຍ່ອຍປະຈຳວັນ. ໂຄງຮ່າງການຈັດຕັ້ງກອງທຶນປົກປັກຮັກສາສິ່ງແວດລ້ອມ ແມ່ນມີໃນຮູບ 1.

ສະພາບໍລິຫານ ມີພາລະບົດບາດຮັບຜິດຊອບລວມ ໃນການຊຸກຍູ້ ການຈັດຕັ້ງວຽກງານ ໃຫ້ບັນລຸຕາມຈຸດປະສົງຂອງ ກປສ ລວມທັງ (i) ການກຳນົດນະໂຍບາຍ, ຍຸດທະສາດ ແລະ ບູລິມະສິດຂອງ ກປສ; ແລະ (ii) ຊີ້ນຳ ຕິດຕາມກວດກາ ການເຄື່ອນໄຫວ

*ຮູບ 1. ໂຄງຮ່າງການຈັດຕັ້ງກອງທຶນປົກປັກຮັກສາສິ່ງແວດລ້ອມ*



ວຽກງານຂອງຫ້ອງການ ເພື່ອຮັບປະກັນການຈັດຕັ້ງປະຕິບັດໜ້າທີ່ ແລະວຽກງານຂອງຕົນໃຫ້ມີປະສິດທິຜົນ.

ສະພາບໍລິຫານຂອງ ກປສ ມີຜູ້ຕາງໜ້າຈາກກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ, ອຳນາດການປົກຄອງທ້ອງຖິ່ນ, ສະພາການຄ້າ ແລະ ອຸດສາຫະກຳ, ສະຖາບັນຄົ້ນຄວ້າ ແລະ ອົງການຈັດຕັ້ງສັງຄົມ ໂດຍມີປະທານ 1 ທ່ານ, ຮອງປະທານ 2 ທ່ານ ແລະ ສະມາຊິກອີກຈຳນວນໜຶ່ງ.

ການເຄື່ອນໄຫວຂອງສະພາບໍລິຫານ ແມ່ນໄດ້ຮັບການສະໜັບສະໜູນຈາກຫ້ອງການບໍລິຫານ ທີ່ມີຜູ້ອຳນວຍການເປັນຜູ້ນຳພ້ອມດ້ວຍພະນັກງານຈຳນວນໜຶ່ງສະໜັບສະໜູນ ຊຶ່ງຈຳນວນຂຶ້ນ ກັບໂຄງການ.

# 3. ວິໄສທັດຂອງ ກປສ

## *3.1. ວິໄສທັດໄລຍະຍາວຂອງ ກປສ*

ຈຸດປະສົງລວມຂອງແຜນຍຸດທະສາດຂອງ ກປສ ແມ່ນສ້າງ ແລະມີກົນໄກການສະໜອງທຶນແບບຍືນຍົງ ເຂົ້າໃນການປົກປັກຮັກສາ ສິ່ງແວດລ້ອມ ທີ່ຈະປະກອບສ່ວນເຂົ້າໃນຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ. ດັ່ງນັ້ນ, ການເຄື່ອນໄຫວຂອງ ກປສ ໃນຕໍ່ໜ້າ ຈະປະກອບສ່ວນໃນການສ້າງຜົນງານໃຫ້ໄດ້ຕາມຈຸດປະສົງຂອງລັດຖະບານ ແລະ ຈຸດປະສົງຂອງແຜນພັດທະນາສະຫັດສະວັດ ຢູ່ ສປປລາວ ລວມທັງພັນທະຕໍ່ສາກົນ ຂອງ ສປປລາວ.

ເມື່ອເປັນເຊັ່ນນີ້, ຄາດວ່າໃນປີ 2010 ກປສ ຈະກາຍເປັນກົນໄກຕົ້ນຕໍ ໃນການລະດົມທຶນຮອນຕ່າງໆ ມາໃຫ້ວຽກງານປົກປັກຮັກສາສິ່ງແວດລ້ອມຢູ່ ສປປລາວ (ເຊັ່ນ ການປະກອບສ່ວນຂອງລັດຖະບານ, ຜູ້ໃຫ້ທຶນ, ແລະ ຄ່າທຳນຽມສິ່ງແວດລ້ອມບາງຢ່າງ). ຕົວຢ່າງອີກອັນໜຶ່ງ. ການຊ່ວຍເຫຼືອລ້າຂອງທະນາຄານໂລກ ສຳລັບໂຄງການສິ່ງແວດລ້ອມແລະສັງຄົມຢູ່ ສປປລາວ (ຄສລ) ເພື່ອມາສ້າງຄວາມສາມາດໃນການຄຸ້ມຄອງແລະດຳເນີນ ກປສ ເພື່ອຮັບຮອງເອົາໂຄງການຍ່ອຍລວມທັງສະໜອງທຶນ, ຕິດຕາມກວດກາແລະຕີລາຄາພ້ອມ, ອັນຈະເຮັດໃຫ້ ກປສ ສາມາດນຳໃຊ້ລາຍໄດ້ຈາກໂຄງການນ້ຳເທີນ 2 ຢ່າງມີປະສິດທິຜົນແລະຄຸ້ມຄ່າ.

ເຖິງແມ່ນໄດ້ສ້າງຂຶ້ນເພື່ອສະໜອງທຶນຮອນ ໃຫ້ແກ່ການຄຸ້ມຄອງແລະປົກປັກຮັກສາສິ່ງແວດລ້ອມກໍດີ, ກປສ ບໍ່ໄດ້ຄາດວ່າຈະຮັບຜິດຊອບຄຸ້ມຄອງ ຄ່າທຳນຽມແລະຄ່ານຳໃຊ້ຊັບພະຍາກອນທັງໝົດຢູ່

ສປປລາວ. ລາຍລະອຽດໃນການສ້າງຕັ້ງກົນໄກການເງິນແບບຍືນຍົງ ຍັງຈະໄດ້ສືບຕໍ່ປຶກສາຫາລືກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນຊຸມປີຕໍ່ໜ້າ.

ການສະໜັບສະໜູນກິດຈະການຕ່າງໆຂອງ ກປສ ຈະອີງໃສ່ຫຼັກການປະຕິບັດງານດັ່ງຕໍ່ໄປນີ້:

- ***ການເປັນເຈົ້າແລະຄວາມຮັບຜິດຊອບ:*** ຜູ້ທີ່ໄດ້ຮັບທຶນຮອນຈາກ ກປສ ຈະຮັບຜິດຊອບຢ່າງເຕັມສ່ວນທີ່ຈະຈັດຕັ້ງປະຕິບັດກິດຈະການໃຫ້ໄດ້ຮັບຜົນສຳເລັດ. ຜູ້ທີ່ໄດ້ຮັບທຶນຮອນ ຍັງຈະຮັບຜິດຊອບ ເຮັດໃຫ້ການນຳໃຊ້ທຶນຮອນນັ້ນສົມເຫດສົມຜົນ ແລະບັນລຸຜົນທີ່ເຫັນດີນຳກັນມາ;

- ***ຄວາມໂປ່ງໃສແລະປະສິດທິພາບ:*** ການນຳໃຊ້ທຶນຮອນຂອງ ກປສ ຮຽກຮ້ອງໃຫ້ຜູ້ໄດ້ທຶນນັ້ນຕ້ອງຮັບປະກັນຄວາມໂປ່ງໃສໃນການນຳໃຊ້ທຶນນັ້ນ ແລະ ໃຫ້ເປີດເຜີຍການໝູນວຽນຂອງເງິນໃຫ້ມວນຊົນຊາບໄດ້, ເມື່ອຈຳເປັນ. ທຶນທີ່ໄດ້ຮັບມານັ້ນ ຈະໄດ້ນຳໃຊ້ ຢ່າງມີປະສິດທິພາບ, ເຮັດໃຫ້ຜົນໄດ້ຂອງກຸ່ມເປົ້າໝາຍນັ້ນສູງສຸດ. ເພື່ອປັບປຸງປະສິດທິພາບ, ກປສ ຈະສະໜອງທຶນໂດຍກົງໃຫ້ແກ່ຜູ້ທີ່ຂໍທຶນ.

- ***ການຈັດຕັ້ງປະຕິບັດນະໂຍບາຍຂອງລັດໃຫ້ມີປະສິດທິຜົນ:*** ກິດຈະການ ທີ່ດຳເນີນໂດຍການສະໜັບສະໜູນທາງດ້ານທຶນຮອນຈາກ ກປສ ຈະປະກອບສ່ວນເຮັດໃຫ້ການຈັດຕັ້ງປະຕິບັດ ນະໂຍບາຍທີ່ກ່ຽວຂ້ອງຂອງລັດຖະບານ ມີປະສິດທິຜົນ.

- ***ບັນລຸຜົນແບບວັດແທກໄດ້:*** ກິດຈະການທີ່ຈະດຳເນີນດ້ວຍທຶນຮອນທີ່ ກປສ ສະໜັບສະໜູນຈະໃຫ້ຜົນງານທີ່ສາມາດວັດແທກໄດ້. ຜົນທີ່ຢາກໄດ້ນັ້ນ ຈະໄດ້ກຳນົດພ້ອມກັບທຶນຮອນແລະໄລຍະເວລາຈັດຕັ້ງປະຕິບັດຄັກແນ່. ຜົນງານທີ່ອອກມາ ຈະເປັນຕົວຊີ້ວັດສຳລັບທຶນຮອນທີ່ໄດ້ຈ່າຍໄປ.

- ***ຄວາມຍືນຍົງ:*** ກິດຈະການທີ່ໄດ້ຮັບການສະໜັບສະໜູນຄວນຈະຍືນຍົງ ແລະ ນຳຜົນປະໂຫຍດມາໃຫ້ຍາວນານເກີນໄລຍະເວລາຈັດຕັ້ງປະຕິບັດທີ່ໄດ້ກຳນົດໄວ້. ການຈັດຕັ້ງປະຕິບັດແລະດຳເນີນໂຄງການຍ່ອຍ ຈະໄດ້ເຮັດຕາມລະບຽບການປົກປັກຮັກສາສິ່ງແວດລ້ອມແລະສັງຄົມ (ເຊັ່ນກົດໝາຍວ່າດ້ວຍສິ່ງແວດລ້ອມ, ລະບຽບການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ດຳລັດ/ຂໍ້ຕົກລົງ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ).

## *3.2. ແຜນຍຸດທະສາດໄລຍະກາງຂອງ ກປສ (2006-2010)*

ສຳລັບໄລຍະກາງ (ຮອດປີ 2010), ແຜນຍຸດທະສາດ 5 ປີຂອງ ກປສ ສະບັບນີ້ ແມ່ນສຸມໃສ່ ເພື່ອຮັບປະກັນກິດຈະການດັ່ງຕໍ່ໄປນີ້:

- ພັດທະນາການຮ່ວມງານຍຸດທະສາດ ກັບອົງການຕ່າງໆຂອງລັດ, ຜູ້ໃຫ້ທຶນແລະພາກສ່ວນເອກກະຊົນ ເພື່ອໃຫ້ການສະໜັບສະໜູນ ທາງດ້ານຍຸດທະສາດແລະທຶນຮອນ ແລະຈັດຕັ້ງກິດຈະການຂອງ ກປສ (ເບິ່ງ ວັກ 4.1);

- ສະແດງໃຫ້ເຫັນ ການຄຸ້ມຄອງທີ່ດີທາງດ້ານການເງິນຂອງ ກປສ ດ້ວຍການສ້າງແລະນຳໃຊ້ຂັ້ນຕອນດຳເນີນງານແລະຈັດຕັ້ງປະຕິບັດທີ່ຈະແຈ້ງແລະໂປ່ງໃສ, ຊຶ່ງມີການຮັບປະກັນໃນລະດັບທີ່ແນ່ນອນ ຕໍ່ລັດຖະບານ, ຜູ້ໃຫ້ທຶນ, ແລະ ຜູ້ລົງທຶນ ວ່າທຶນຮອນດັ່ງກ່າວ ແມ່ນຈະໄດ້ນຳໃຊ້ຢ່າງມີປະສິດທິຜົນ (ເບິ່ງ ວັກ 4.2);
- ສ້າງເຄື່ອງມືສະໜອງທຶນຮອນແບບປະສົມ ຊຶ່ງສາມາດນຳໃຊ້ເພື່ອແກ້ໄຂຄວາມຈຳເປັນແລະບູລິມະສິດຕ່າງໆ ສຳລັບການປົກປັກຮັກສາສິ່ງແວດລ້ອມ (ເບິ່ງ ວັກ 4.3);
- ສະໜັບສະໜູນວຽກບູລິມະສິດໃນການປົກປັກຮັກສາສິ່ງແວດລ້ອມຢູ່ ສປປລາວ ເປັນຕົ້ນ (1) ປັບປຸງການຄຸ້ມຄອງສິ່ງແວດລ້ອມ; (2) ການຄຸ້ມຄອງຊັບພະຍາກອນທຳມະຊາດ; ໂດຍສະເພາະ ຊີວະນາໆພັນແລະການພັດທະນາຊຸມຊົນ; ແລະ (3) ການປ້ອງກັນແລະຄວບຄຸມມົນລະພິດ (ເບິ່ງ ວັກ 4.4);
- ຊອກເອົາຄຳເຫັນແນະນຳຈາກຜູ້ທີ່ມີສ່ວນຮ່ວມຕ່າງໆ ເພື່ອເຮັດການຕິດຕາມກວດກາແລະຊີ້ນຳນຳພາວຽກງານ ເພື່ອຮັບປະກັນວ່າທຶນຮອນທີ່ໄດ້ໃຊ້ໄປນັ້ນ ແມ່ນມີປະສິດທິພາບຕາມຫຼັກການດຳເນີນງານຂອງ ກປສ (ເບິ່ງ ວັກ 4.5);

ຕໍ່ຈຸດປະສົງດັ່ງກ່າວ, ກປສ ມີແຜນເຄື່ອນໄຫວແບບຮອບດ້ານໃນການຄຸ້ມຄອງຊັບພະຍາກອນທຳມະຊາດ (ທີ່ດິນ, ນ້ຳ, ຊີວະນາໆພັນ ແລະປ່າໄມ້), ການຄວບຄຸມມົນລະພິດ ແລະ ການພັດທະນາຊຸມຊົນ ເພື່ອປະກອບສ່ວນເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ໄດ້ຮັບຜົນສູງຂຶ້ນ.

## 4. ຍຸດທະສາດຈັດຕັ້ງປະຕິບັດ

### 4.1. ພັດທະນາການຮ່ວມງານຍຸດທະສາດ

ການພັດທະນາການຮ່ວມງານຍຸດທະສາດ ຈະສຸມໃສ່ສອງດ້ານ:

1) ຊອກຮູ້ບັນຫາທີ່ເປັນບູລິມະສິດ ໃນການຄຸ້ມຄອງແລະປົກປັກຮັກສາສິ່ງແວດລ້ອມ ແລະ ຮັບປະກັນວ່າການສະໜອງທຶນຮອນຂອງ ກປສ ແມ່ນເອົາໄປເພີ້ມໃສ່ຄວາມພະຍາຍາມ ຊຶ່ງຜູ້ທີ່ມີສ່ວນຮ່ວມໄດ້ເລີ້ມມາແລ້ວ; ແລະ
2) ຊອກຫາທຶນຮອນ ເພື່ອສະໜັບສະໜູນວຽກບູລິມະສິດແລະສ້າງກົນໄກການເບີກຈ່າຍເງິນໃຫ້ຖືກຕ້ອງເໝາະສົມ.

ໃນຖານະອົງການການເງິນຕົ້ນຕໍຢູ່ ສປປລາວ ທີ່ໃຫ້ການສະໜັບສະໜູນແກ່ໂຄງການ/ກິດຈະການ ຄຸ້ມຄອງສິ່ງແວດລ້ອມ, ຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ການອະນຸລັກຊີວະນາໆພັນ ແລະການພັດທະນາຊຸມຊົນທີ່ຕາມມາ, ກປສ ຈະເຮັດວຽກຢ່າງໃກ້ສິດກັບອົງການລັດເພື່ອຂໍທິດທາງ ແລະ ພ້ອມດຽວກັນນັ້ນ ກໍຊອກຮູ້ບ່ອນທີ່ຕ້ອງການທຶນຮອນ. ໃນການສະໜອງທຶນນີ້, ຈະໄດ້ມີການພົວພັນຢ່າງໃກ້ສິດກັບທຸກອົງການ ແລະ ກອງທຶນພັດທະນາອື່ນໆທີ່ສ້າງຂຶ້ນມາແລ້ວ ໂດຍສະເພາະ ກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ກອງທຶນພັດທະນາປ່າໄມ້ແລະຊັບພະຍາກອນປ່າໄມ້ ແລະກອງທຶນອື່ນໆ ເພື່ອເສີມໃສ່ກັນ.

ນອກນັ້ນ ກປສ ຈະໄດ້ຮ່ວມມືກັບທະນາຄານພັດທະນາຕ່າງໆ ໃນການສະໜູນສະໜູນກິດຈະການລົງທຶນທີ່ດີຕໍ່ສິ່ງແວດລ້ອມ ຫຼື ໂຄງ

ການແກ້ໄຂບັນຫາສິ່ງແວດລ້ອມ ຂອງບັນດາທຸລະກິດ. ກປສ ຍັງຈະໄດ້ຮ່ວມມືກັບບັນດາທຸລະກິດ ໃນການເພີ້ມທຶນຮອນໃຫ້ແກ່ ກປສ.

ໃນໄລຍະເລີ້ມຕົ້ນ ລັດຖະບານ ໄດ້ມີການປະກອບສ່ວນທາງດ້ານວັດຖຸແລະແຮງງານໃຫ້ ກປສ ແລະໄດ້ຮັບການສະໜັບສະໜູນຈາກທະນາຄານພັດທະນາອາຊີ ໃນການສ້າງກົນໄກການເງິນ ສຳລັບການປົກປັກຮັກສາສິ່ງແວດລ້ອມນີ້ຂຶ້ນຢູ່ ສປປລາວ ແລະການສະໜັບສະໜູນທຶນຊ່ວຍເຫຼືອລ້າຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການສິ່ງແວດລ້ອມແລະສັງຄົມ ຢູ່ສສປ ລາວ ອີກ, ຊຶ່ງມີ 2 ກອງທຶນຍ່ອຍແລະບ້ວງຄຸ້ມຄອງກອງທຶນຍ່ອຍດັ່ງກ່າວ. ແຕ່ຢ່າງໃດກໍດີມັນເປັນທຶນຮອນເບື້ອງຕົ້ນ ຊຶ່ງຍັງບໍ່ທັນສາມາດຕອບສະໜອງກັບການປະຕິບັດໜ້າທີ່ຂອງ ກປສ ແລະເພື່ອໃຫ້ມີທຶນຮອນຍືນຍົງນັ້ນ, ກປສ ຈະລະດົມ ທຶນຮອນແລະສ້າງລາຍຮັບເພີ້ມດັ່ງນີ້:

- ***ການຊ່ວຍເຫຼືອ ແລະ ການກູ້ຢືມຕ່າງປະເທດ:*** ໃນປັດຈຸບັນນີ້ ທະນາຄານພັດທະນາອາຊີ ກໍໄດ້ໃຫ້ການສະໜັບສະໜູນຕົ້ນທຶນ ໃນການສ້າງຕັ້ງກົນໄກການເງິນ ສຳລັບການປົກປັກຮັກສາສິ່ງແວດລ້ອມນີ້ຂຶ້ນຢູ່ ສປປລາວ ແລະທະນາຄານໂລກ ຊ່ວຍເຫຼືອລ້າ ສຳລັບຈັດຕັ້ງປະຕິບັດໂຄງການສິ່ງແວດລ້ອມແລະສັງຄົມຢູ່ສປປລາວອີກ, ຊຶ່ງມີ 2 ກອງທຶນຍ່ອຍແລະບ້ວງ ຄຸ້ມຄອງກອງທຶນຍ່ອຍ. ກປສ ຈະພະຍາຍາມຮ່ວມມືກັບອົງການໃຫ້ທຶນສອງຝ່າຍ ແລະຫຼາຍຝ່າຍຕື່ມ ເພື່ອຈັດຕັ້ງວຽກທີ່ເປັນບູລິມະສິດ.
- ***ງົບປະມານຂອງລັດ:*** ສປປລາວ ມີທ່າແຮງໃນການຂຸດຄົ້ນຫາແຫຼ່ງລາຍຮັບ ຈາກການນຳໃຊ້ຊັບພະຍາກອນທຳມະຊາດແລະກິດຈະການຕ່າງໆ (ໄຟຟ້ານ້ຳຕົກ, ບໍ່ແຮ່, ທ່ອງ

ທ່ຽວທຳມະຊາດ ..), ກປສ ຈະໄດ້ສຶກສາຄວາມເປັນໄປໄດ້ໃນການເກັບຄ່ານຳໃຊ້ ແລະ ຄ່າທຳນຽມ ເພື່ອປະກອບສ່ວນເຂົ້າໃນການເພີ່ມລາຍຮັບຂອງກອງທຶນ;

- ***ການປະກອບສ່ວນຂອງພາກສ່ວນເສດຖະກິດ ແລະ ບຸກຄົນທົ່ວໄປ:*** ການປະກອບສ່ວນຈາກພາກສ່ວນເສດຖະກິດແມ່ນເປັນຄວາມຫວັງສູງ ເພາະລັດຖະບານໄດ້ອອກນະໂຍບາຍສຳລັບຂະແໜງໄຟຟ້ານ້ຳຕົກ ໃຫ້ປະກອບສ່ວນໃຫ້ ກປສ ມາແລ້ວ ແລະທຸລະກິດອື່ນໆ ກໍໄດ້ຕົກລົງກັບລັດຖະບານທີ່ຈະປະກອບສ່ວນໃຫ້ ກປສ, ຫ້ອງການ ກປສ ຈະໄດ້ສືບຕໍ່ເຮັດວຽກກັບພາກສ່ວນດັ່ງກ່າວ ແລະ ອົງການລັດ ເພື່ອໃຫ້ມີການປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ.
- ***ດອກເບ້ຍ ຫຼື ຜົນກຳໄລ ທີ່ເກີດຈາກກອງທຶນ:*** ກປສ ຈະໄດ້ເອົາທຶນຮອນ ທີ່ຍັງບໍ່ທັນໄດ້ຈ່າຍເຂົ້າໃນວຽກງານຂອງ ກປສ ນັ້ນໄປລົງທຶນເພື່ອມີລາຍຮັບ ໂດຍສະເພາະ ທຶນຮອນທີ່ເປັນຕົ້ນທຶນ (ບໍ່ໃຫ້ໝົດເປັນ) ຄືດັ່ງເງິນກູ້ຢືມຈາກທະນາຄານພັດທະນາອາຊີ.

## ຍຸດທະສາດການລົງທຶນ

ສະພາບໍລິຫານ ໂດຍມີຫ້ອງການບໍລິຫານເປັນຜູ້ຊ່ວຍ ຈະສ້າງບົດແນະນຳກ່ຽວກັບການລົງທຶນ ເພື່ອບັນລຸຈຸດປະສົງທີ່ຢາກຫຼຸດຜ່ອນຄວາມສ່ຽງຕໍ່ທຶນຮອນຂອງ ກປສ, ພ້ອມທັງຮັບປະກັນຄວາມຍືນຍົງໃຫ້ແກ່ການຄຸ້ມຄອງບໍລິຫານ ແລະ ການດຳເນີນງານຂອງ ກປສ. ບົດແນະນຳດັ່ງກ່າວ ຈະອະນຸຍາດເອົາຕົ້ນທຶນຂອງ ກປສ ໄປລົງທຶນໄດ້ຢູ່ພາຍໃນ

ກໍຄືຢູ່ຕ່າງປະເທດ, ເພື່ອເຮັດໃຫ້ລາຍຮັບຈາກການລົງທຶນສູງແລະມີຄວາມສ່ຽງຕໍ່າ.

ສະພາບໍລິຫານ ຈະຄັດເລືອກແລະເຊັນສັນຍາ ກັບບໍລິສັດຄຸ້ມຄອງຊັບສິນລະດັບມືອາຊີບ ຫຼື ທະນາຄານການຄ້າທີ່ມີຖານະ, ຊື່ສຽງແລະຄວາມສາມາດດີ ເພື່ອຊ່ວຍຄຸ້ມຄອງແລະນໍາເອົາທຶນຮອນທີ່ບໍ່ທັນໄດ້ນໍາໃຊ້ຂອງ ກປສ ໄປລົງທຶນຕາມບົດແນະນໍາກ່ຽວກັບການລົງທຶນຂອງສະພາບໍລິຫານຂອງ ກປສ.

## *4.2. ສ້າງຂັ້ນຕອນດໍາເນີນງານແບບຖືກຕ້ອງແລະໂປ່ງໃສ*

## ຂັ້ນຕອນປະຕິບັດງານທີ່ໂປ່ງໃສ

ກປສ ຈະໄດ້ເຮັດວຽກກັບຜູ້ໃຫ້ທຶນ, ອົງການຂອງລັດແລະທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອພັດທະນາກົນໄກແລະຂັ້ນຕອນດັ່ງກ່າວ ເພື່ອສະໜອງທຶນຮອນໃຫ້ແກ່ໂຄງການຍ່ອຍ ທີ່ຂະແໜງການແລະທ້ອງຖິ່ນ, ອົງການສັງຄົມ ສະເໜີມາ ຫຼື ສໍາລັບປັບປຸງຫ້ອງການ ກປສ ໃຫ້ເຂັ້ມແຂງຂຶ້ນ. ໃນປັດຈຸບັນ ເອກະສານ ຕ່າງໆ ໄດ້ຖືກຮ່າງຂຶ້ນແລະຮັບຮອງຈາກສະພາບໍລິຫານ ກປສ. ຜ່ານການຈັດຕັ້ງປະຕິບັດໂຄງການຍ່ອຍ, ກປສ ຈະໄດ້ຮັບບົດຮຽນຫຼາຍຂຶ້ນ ແລະ ຈາກນັ້ນ ຈະໄດ້ປັບປຸງເອກະສານດໍາເນີນງານຂອງຕົນ, ຂະບວນການພິຈາລະນາໂຄງການ, ຂັ້ນຕອນຜ່ານແລະຮັບຮອງເອົາໂຄງການ ແລະ ກົນໄກການຕິດຕາມກວດກາ.

## ການພັດທະນາລະບົບບັນຊີ

ກປສ ຈະໄດ້ພັດທະນາລະບົບບັນຊີແລະຕິດຕາມກວດກາໂຄງການຍ່ອຍ ອັນໃໝ່ແລະແບບອາຊີບຂຶ້ນ. ລະບົບດັ່ງກ່າວ ຈະໄດ້ນຳໃຊ້ສຳລັບ ກປສ ທັງໝົດ, ລວມທັງໃນໂຄງການຍ່ອຍ ແລະ ກອງທຶນຍ່ອຍ. ລາຍລະອຽດຂອງລະບົບດັ່ງກ່າວ ແມ່ນມີໃນຄູ່ມືດຳເນີນງານ. ມາຮອດປັດຈຸບັນ, ກປສ ໄດ້ໃຊ້ລະບົບບັນຊີງ່າຍໆ ສ້າງຂຶ້ນໃນໂປຼແກມເອັກແຊນ.

ໃນໄລຍະນຳໃຊ້ລະບົບດັ່ງກ່າວ, ຄາດວ່າຍັງຕ້ອງການເຮັດວຽກດັ່ງຕໍ່ໄປນີ້ ເພື່ອເຮັດໃຫ້ລະບົບເຄື່ອນໄຫວໄດ້ຄົບຖ້ວນ:

- ຝຶກອົບຮົມພະນັກງານຂອງ ກປສ;
- ປັບປຸງ ຮູບແບບຂອງບັນຊີ ໃຫ້ແທດເໝາະ;
- ສ້າງແລະປັບປຸງຟອມແລະບົດລາຍງານມາດຕະຖານ;
- ກະກຽມຄູ່ມືການບັນຊີຕົວຈິງ ເພື່ອນຳໃຊ້ໃນລະບົບບັນຊີຂອງ ກປສ.

### *4.3. ສ້າງເຄື່ອງມືສະໜອງທຶນທີ່ເໝາະສົມ*

ຄືໄດ້ກຳນົດໃນດຳລັດວ່າດ້ວຍ ກປສ, ທຶນຮອນ ແມ່ນສາມາດສະໜອງໃຫ້ໃນຮູບການໃຫ້ທຶນຊ່ວຍເຫຼືອລ້າ, ກູ້ຢືມແລະອຸດໜູນແບບເອົາດອກເບ້ຍ. ການສະໜັບສະໜູນດ້ານການເງິນໃນຮູບແບບເຫຼົ່ານີ້ ເອີ້ນວ່າໂຄງການຍ່ອຍ. ໃນປັດຈຸບັນມີແຕ່ຮູບແບບການຊ່ວຍເຫຼືອລ້າເທົ່ານັ້ນ.

ໃນຊຸມປີທີ່ຈະມາເຖິງນີ້, ຈະໄດ້ມີການພັດທະນາບັນທັດຖານສຳລັບໂຄງການທີ່ມີສິດໄດ້ທຶນແລະເອກກະສານ ແລະ ຂັ້ນຕອນດຳເນີນ

ງານ ສຳລັບຮູບການໃຫ້ທຶນ 2 ຢ່າງອື່ນ. ລັກສະນະຫຼັກການປະສົມປະສານຂອງມັນ ຈະມີ:

- ***ເງິນກູ້ດ້ວຍອັດຕາດອກເບ້ຍຕ່ຳ:*** ບາງທີ, ທາງເລືອກທີ່ເປັນໄປໄດ້ສຳລັບວຽກງານນີ້ ອາດຈະມີການເຮັດສັນຍາກັບທະນາຄານທຸລະກິດ ເຊິ່ງຈະມີການກຳນົດຄ່າບໍລິການ. ການເຈລະຈາກັບທະນາຄານ ຈະແມ່ນຜູ້ອຳນວຍການຫ້ອງການບໍລິຫານກອງທຶນເປັນຜູ້ດຳເນີນ ກ່ອນກຳນົດຂັ້ນຕອນດ້ານການເງິນ ແລະ ເງື່ອນໄຂຂອງການກູ້ຢືມ.
- ***ການຖົມຊຸມອັດຕາດອກເບ້ຍ:*** ບາງທີ, ມັນອາດຈະເຮັດໄດ້ 3 ຮູບແບບ: 1) ການສະໜອງເງິນຊ່ວຍເຫຼືອລ້າເປັນເງິນສົດໃຫ້ແກ່ສະຖາບັນເງິນກູ້ ເພື່ອຕັດອັດຕາດອກເບ້ຍຂອງທະນາຄານສຳລັບເງິນກູ້ຢືມ; 2) ໃຫ້ແກ່ຜູ້ໃຫ້ເງິນກູ້ການຄ້າທີ່ເຂົ້າຮ່ວມໃນແຜນການຂອງລັດຖະບານ ເພື່ອໃຫ້ເປັນດອກເບ້ຍຕ່ຳ; ຫຼື 3) ໃຫ້ແກ່ເງິນກູ້ ທີ່ສະໜອງໃຫ້ແກ່ຜູ້ກູ້ຢືມທີ່ມີເງື່ອນໄຂ ໃຫ້ເປັນອັດຕາດອກເບ້ຍຕ່ຳກວ່າລະດັບອັດຕາດອກເບ້ຍ ໃນທ້ອງຕະຫຼາດ ໂດຍເປັນການຈ່າຍເງິນລ່ວງໜ້າ ຫຼື ຈ່າຍຜ່ານອົງການຈັດຕັ້ງຂອງລັດ. ການຖົມຊຸມອັດຕາດອກເບ້ຍ ເປັນຮູບແບບຂອງກົນໄກການຊົດເຊີຍແກ່ໂຄງການທີ່ມີເງື່ອນໄຂ, ແຕ່ຢູ່ໃນກໍລະນີພິເສດເທົ່ານັ້ນ ໃນເມື່ອຮູບແບບການສະໜອງທຶນດັ່ງກ່າວນີ້ ສາມາດຈະຊ່ວຍຫຼຸດຜ່ອນການລົງທຶນຫຼາຍ.

## *4.4. ສ້າງກອງທຶນຍ່ອຍຂຶ້ນແລະດຳເນີນງານ*

ແຜນຍຸດທະສາດ ກປສ ໄດ້ກຳນົດ 3 ຈຸດປະສົງໃນການປົກປັກຮັກສາສິ່ງແວດລ້ອມດັ່ງນີ້:

ຈຸດປະສົງ 1: ສົ່ງເສີມແລະສະໜັບສະໜູນກິດຈະການ ທີ່ຈະພັດທະນາຊຸມຊົນໃຫ້ມີຄວາມເຂັ້ມແຂງ;

ຈຸດປະສົງ 2: ສົ່ງເສີມແລະສະໜັບສະໜູນ ການຄຸ້ມຄອງ ແລະນຳໃຊ້ແບບຍືນຍົງຊັບພະຍາກອນທຳມະຊາດ;

ຈຸດປະສົງ 3: ສົ່ງເສີມແລະສະໜັບສະໜູນ ການປ້ອງກັນ ແລະຄວບຄຸມມົນລະພິດ.

ເພື່ອສະໜັບສະໜູນກິດຈະການ ທີ່ແກ້ໄຂຈຸດປະສົງທີ່ກ່າວມາເທິງນັ້ນ, ການໃຫ້ທຶນສະໜັບສະໜູນຂອງ ກປສ ແມ່ນຜ່ານກອງທຶນຍ່ອຍ. ບົດສະຫຼຸບກ່ຽວກັບກອງທຶນຍ່ອຍທີ່ໄດ້ສ້າງ ແລະ ຄາດວ່າຈະສ້າງຂຶ້ນແມ່ນມີໃນຕາຕະລາງ 1.

ໃນປັດຈຸບັນ ກປສ ໄດ້ສ້າງກອງທຶນຍ່ອຍຂຶ້ນແລ້ວ 2 ກອງ ດ້ວຍທຶນຊ່ວຍເຫຼືອລ້າຈາກທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປລາວ ຊຶ່ງລາຍລະອຽດມີດັ່ງນີ້:

ກອງທຶນຍ່ອຍ ***"ຈັດຕັ້ງປະຕິບັດນະໂຍບາຍແລະປັບປຸງຄວາມສາມາດ"*** ແນໃສ່ສະໜັບສະໜູນທຶນຮອນໃຫ້ແກ່ໂຄງການ ທີ່ອົງການຕ່າງໆຂອງລັດໃນ ຂັ້ນເມືອງ, ແຂວງ ແລະສູນກາງ, ສະຖາບັນການສຶກສາ ແລະ ຄົ້ນຄວ້າ ແລະ ອົງການຈັດຕັ້ງສັງຄົມທີ່ສະເໜີມາ ເພື່ອດຳເນີນກິດຈະການ ແລະ ແຜນການຕ່າງໆ ໃນ 5 ເລື້ອງ ດັ່ງນີ້:

ເອກະສານຊັດຕິດ 1 - ກອງທຶນຍ່ອຍທີ່ຄາດວ່າຈະສ້າງຂຶ້ນຕາມແຜນຍຸດທະສາດ

| ***ກອງທຶນຍ່ອຍ*** | ***ເວລາທີ່ຄາດວ່າຈະສ້າງຂຶ້ນ*** | ***ສະພາບທຶນຮອນ*** | ***ສະພາບທຶນຮອນ*** |
|---|---|---|---|
| ກອງທຶນຍ່ອຍສຳລັບການຈັດຕັ້ງປະຕິບັດນະໂຍບາຍແລະສ້າງຄວາມສາມາດ | ສ້າງຂຶ້ນໃນປີ 2005 | ທຶນຊ່ວຍເຫຼືອລ້າຂອງທະນາຄານໂລກ | ໂຄງການສິ່ງແວດລ້ອມແລະສັງຄົມຢູ່ ສປປລາວ |
| ກອງທຶນຍ່ອຍສຳລັບ ການລົງທຶນໃສ່ຊີວະນາໆພັນແລະຊຸມຊົນ | ສ້າງຂຶ້ນໃນປີ 2005 | ເບື້ອງຕົ້ນ ທະນາຄານໂລກໃຫ້ທຶນສະໜັບສະໜູນແກ່ແຂວງບໍລິຄຳໄຊ, ຄຳມ່ວນແລະສະຫວັນນະເຂດ | ໂຄງການສິ່ງແວດລ້ອມແລະສັງຄົມຢູ່ ສປປລາວ |
| ກອງທຶນຍ່ອຍສຳລັບຄວບຄຸມສານມົນລະພິດ | ຈະສ້າງຂຶ້ນໃນປີ 2007 | ເບື້ອງຕົ້ນ ຈະນຳໃຊ້ລາຍໄດ້ຈາກຕົ້ນທຶນຂອງ ກປສ | |
| ກອງທຶນຍ່ອຍສຳລັບ ຄຸ້ມຄອງຊັບພະຍາກອນນ້ຳ | ຈະສ້າງຂຶ້ນໃນປີ 2007 | ເບື້ອງຕົ້ນ ຈະນຳໃຊ້ລາຍໄດ້ຈາກຕົ້ນທຶນຂອງ ກປສ | |
| ກອງທຶນຍ່ອຍສຳລັບ ຄຸ້ມຄອງທີ່ດິນ ແບບຍືນຍົງ | ຈະສ້າງຂຶ້ນໃນປີ 2008 | ເບື້ອງຕົ້ນ ຈະນຳໃຊ້ລາຍໄດ້ຈາກຕົ້ນທຶນຂອງ ກປສ | |

- ວຽກງານຕິດຕາມກວດກາ ດ້ານສິ່ງແວດລ້ອມແລະສັງຄົມ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍ ດ້ານສິ່ງແວດລ້ອມ (ສະໜັບສະໜູນການຕິດຕາມກວດກາ ດ້ານສິ່ງແວດລ້ອມແລະສັງຄົມ, ບ້ວງຍ່ອຍ A1 ຂອງ ຄສລ);
- ການຄຸ້ມຄອງອ່າງນ້ຳ ແບບປະສົມປະສານ (ບ້ວງຍ່ອຍ A2 ຂອງ ຄສລ);
- ສະໜັບສະໜູນນະໂຍບາຍ ດ້ານພະລັງງານໄຟຟ້ານ້ຳຕົກ (ບ້ວງຍ່ອຍ A3 ຂອງ ຄສລ);
- ການຄຸ້ມຄອງທາງດ້ານສັງຄົມ (ສະໜັບສະໜູນນະໂຍບາຍຍົກຍ້າຍຈັດສັນປະຊາຊົນ) (ບ້ວງຍ່ອຍ A4 ຂອງ ຄສລ);
- ວຽກງານສຶກສາແລະສ້າງຈິດສຳນຶກດ້ານສິ່ງແວດລ້ອມ (ບ້ວງຍ່ອຍ A5 ຂອງ ຄສລ).

ກອງທຶນຍ່ອຍ "ລົງທຶນແກ່ຊີວະນາໆພັນແລະຊຸມຊົນ" ແນໃສ່ສະໜັບສະໜູນກິດຈະການແລະແຜນການຕ່າງໆຢູ່ສາມແຂວງເປົ້າໝາຍ (ບໍລິຄຳໄຊ, ຄຳມ່ວນ ແລະ ສະຫັວນນະເຂດ):

- ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ໃນການຄຸ້ມຄອງປ່າສະຫງວນ (ບ້ວງຍ່ອຍ B1 ຂອງ ຄສລ) ແລະ ຮັບປະກັນໃຫ້ຊຸມຊົນມີຊີວິດການເປັນຢູ່ຂຶ້ນກັບປ່າສະຫງວນ ຍືນຍົງຂຶ້ນ;
- ລົງທຶນເຂົ້າໃນກິດຈະການປັບປຸງສິ່ງແວດລ້ອມ ຂອງຊຸມຊົນທີ່ທຸກຍາກ ຢູ່ຮາກຖານ ໂດຍແນໃສ່ອະນຸລັກຊີວະນາໆພັນ, ການຄຸ້ມຄອງສິ່ງແວດລ້ອມຂອງຊຸມຊົນ,

ປັບປຸງ ຊີວິດການເປັນຢູ່ ແລະ ການສົ່ງເສີມການທ່ອງທ່ຽວທຳມະຊາດ (ບ້ວງຍ່ອຍ B2 ຂອງ ຄສລ).

ນອກຈາກການປະກອບສ່ວນຂອງຜູ້ໃຫ້ທຶນນີ້ແລ້ວ, ກປສ ຈະໄດ້ໃຊ້ສ່ວນໜຶ່ງ[1]ຂອງງົບປະມານປະຈຳປີຂອງຕົນ ເພື່ອສະໜອງໃຫ້ແກ່ກິດຈະການຕົ້ນຕໍດ້ານສິ່ງແວດລ້ອມຢູ່ ສປປລາວ ຈາກກອງທຶນຍ່ອຍຕ່າງໆຂອງຕົນ. ສ່ວນໜຶ່ງຈະໃຊ້ເພື່ອຮັບໃຊ້ວຽກງານຂອງຫ້ອງການບໍລິຫານ ກປສ ເຊັ່ນວຽກບໍລິຫານແລະຄ່າຄຸ້ມຄອງໂຄງການ.

ໃນຊຸມປີທີ່ຈະມາເຖິງນີ້, ຫ້ອງການ ກປສ ຄາດວ່າຈະເປີດກອງທຶນຍ່ອຍຂຶ້ນອີກ 3 ກອງ ເພື່ອແກ້ໄຂບັນຫາບູລິມະສິດໃນ ສປປລາວ. ມັນຈະມີກອງທຶນຍ່ອຍດັ່ງນີ້:

1. ***ສົ່ງເສີມແລະສະໜັບສະໜູນການປ້ອງກັນແລະຄວບຄຸມມົນລະພິດ:*** ກອງທຶນຍ່ອຍດັ່ງກ່າວ ຈະໃຫ້ການສະໜັບສະໜູນແກ່ໂຄງການຍ່ອຍທີ່ປະກອບສ່ວນເຂົ້າໃນການຄວບຄຸມມົນລະພິດ ທີ່ບໍ່ມີແຫຼ່ງສະເພາະ (ການຄຸ້ມຄອງສິ່ງເສດເຫຼືອ; ການຄຸ້ມຄອງສານມົນລະພິດຕົກຄ້າງ ຂອງຢາປາບສັດຕູພືດ; ແລະການຄຸ້ມຄອງສານເຄມີທີ່ເປັນພິດ). ກິດຈະການເຫຼົ່ານີ້ຍັງລວມໄປເຖິງ ການພັດທະນາຄວາມສາມາດໃຫ້ແກ່ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມແລະອົງການໃນທ້ອງຖິ່ນ.

---

[1] ຕາມການແນະນຳຂອງສະພາບໍລິຫານ ແມ່ນໃຫ້ໃຊ້ 50% ຂອງງົບປະມານປະຈຳປີ ໄປສະໜັບສະໜູນໂຄງການຍ່ອຍ

2. ***ສະໜັບສະໜູນ ຄວາມພະຍາຍາມຕໍ່ການຄຸ້ມຄອງຊັບພະຍາກອນນໍ້າແບບຍືນຍົງ:*** ກອງທຶນຍ່ອຍດັ່ງກ່າວ ຈະໃຫ້ການສະໜັບສະໜູນ ແກ່ການຈັດຕັ້ງປະຕິບັດແນວຄິດກ່ຽວກັບ ການຄຸ້ມຄອງຊັບພະຍາກອນນໍ້າແບບປະສົມປະສານໃນລະດັບຊາດແລະທ້ອງຖິ່ນ ຢູ່ ສປປລາວ. ຄາດວ່າ ການສະໜອງທຶນຈະໄດ້ໃຫ້ແກ່ກິດຈະການທີ່ 1) ຈະປັບປຸງການອະນຸລັກໃນໄລຍະຍາວ ແລະການຄຸ້ມຄອງຊັບພະຍາກອນນໍ້າ, ແລະ 2) ໄດ້ຮັບການຮັບຮອງເອົາໂດຍຄະນະກຳມະການໃນລະດັບອ່າງ ຫຼື ອີງການທີ່ເທົ່າທຽມກັນນີ້. ການກຳນົດກິດຈະການທີ່ຈະໃຫ້ການສະໜັບສະໜູນ ຈະໄດ້ອີງໃສ່ບົດຮຽນທີ່ໄດ້ມາຈາກອ່າງນໍ້າງື່ມ ແລະຜ່ານການຈັດຕັ້ງປະຕິບັດບ້ວງຍ່ອຍ A2 ຂອງ ຄສລ, ໃນເມື່ອກິດຈະການດັ່ງກ່າວ ໃນປັດຈຸບັນ ແມ່ນໄດ້ສຸມໃສ່ອ່າງນໍ້າເທີນ/ນໍ້າກະດິງ ກປສ ຄາດວ່າຈະໄດ້ຂະຫຍາຍໄປໃສ່ອ່າງນໍ້າອື່ນ.

3. ***ສົ່ງເສີມແລະສະໜັບສະໜູນການຄຸ້ມຄອງທີ່ດິນແບບຍືນຍົງ.*** ກອງທຶນຍ່ອຍດັ່ງກ່າວ ຈະໃຫ້ການສະໜັບສະໜູນຜູ້ຮ່ວມງານທີ່ຢາກແກ້ໄຂບັນຫາສິ່ງແວດລ້ອມ ທີ່ກ່ຽວຂ້ອງກັບວິທີການຄຸ້ມຄອງທີ່ດິນ. ໂດຍສະເພາະ, ຄາດວ່າ ການສະໜອງທຶນຈາກກອງທຶນຍ່ອຍນີ້ ຈະສະໜັບສະໜູນ ແກ່ການຄຸ້ມຄອງລະບົບນິເວດແບບຮອບດ້ານ, ການນໍາໃຊ້ທີ່ດິນ, ການພັດທະນາຊີວິດການເປັນຢູ່ໃໝ່ ແລະການສ້າງໂຄງລ່າງຄຸ້ມຄອງທີ່ດິນທີ່ຊຸມຊົນເປັນເຈົ້າການ. ການສ້າງຕັ້ງກອງທຶນຍ່ອຍດັ່ງກ່າວ ຄາດວ່າຈະເຮັດໄດ້ໃນປີ 2008 ແລະ ຍັງມີຄວາມຈຳເປັນຕ້ອງໄດ້ມີການປຶກສາຫາລືກັບ

ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຂອບເຂດຂອງການໃຫ້ທຶນອີກ.

### *4.5. ຂັ້ນຕອນປຶກສາຫາລືແລະຕິດຕາມກວດກາທີ່ເໝາະສົມ*

ກປສ ຈະສ້າງແລະຈັດຕັ້ງກົນໄກປຶກສາຫາລືແລະຕິດຕາມກວດກາທີ່ເໝາະສົມ ເພື່ອຮັບປະກັນວ່າຜູ້ທີ່ມີສ່ວນຮ່ວມກ່ຽວຂ້ອງໄດ້ຮັບການປຶກສາຫາລືແລະແຈ້ງຂ່າວ ກ່ຽວກັບການເຄື່ອນໄຫວຂອງ ກປສ ແບບໂປ່ງໃສ ແລະ ເຮັດຕາມຫຼັກການດຳເນີນງານຂອງ ກປສ. ກົນໄກອັນສຳຄັນໃນການເຄື່ອນໄຫວແລະຈັດຕັ້ງປະຕິບັດວຽກງານ ທີ່ຈະໄດ້ນຳໃຊ້ຢ່າງສະໝ່ຳສະເໝີ ມີ:

### ກອງປະຊຸມກັບຜູ້ມີສ່ວນຮ່ວມປະຈຳປີ

ຫ້ອງການ ກປສ ຈະຈັດກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງປະຈຳປີ ເພື່ອແຈ້ງການເຄື່ອນໄຫວຂອງ ກປສ ໃຫ້ເຂົາເຈົ້າທັງໝົດຊາບ. ພາກສ່ວນທີ່ກ່ຽວຂ້ອງຈາກພາຍໃນ ພ້ອມທັງຕົວແທນຈາກອົງການຊ່ວຍເຫຼືອເພື່ອການພັດທະນາສາກົນ ຈະຖືກເຊື້ອເຊີນໃຫ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ.

ຜູ້ອຳນວຍການຫ້ອງການບໍລິຫານກອງທຶນ ໂດຍມີພະນັກງານຂໍ້ມູນຂ່າວສານ/ເອກະສານຊ່ວຍ, ຈະເປັນຜູ້ຮັບຜິດຊອບໃນການຈັດກອງປະຊຸມດັ່ງກ່າວ.

### ການສ້າງສູນຂ່າວສານມວນຊົນ

ຫ້ອງການ ກປສ ຈະສ້າງສູນຂ່າວສານມວນຊົນຂຶ້ນ ໂດຍມີຈຸດປະສົງເພື່ອໃຫ້ຜູ້ມີສ່ວນຮ່ວມຮັບຂ່າວສານ ກ່ຽວກັບການເຄື່ອນໄຫວຂອງ

ກປສ ແລະ ຂ່າວສານອື່ນໆ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ. ກິດຈະການຂອງສູນດັ່ງກ່າວ ຈະຮັບປະກັນວ່າ ກປສ ສາມາດ:

- ໃຫ້ຂ່າວສານກ່ຽວກັບເຄື່ອງມືສະໜັບສະໜູນທຶນຮອນທີ່ມີຢູ່ ຈາກ ກປສ.
- ມີເອກະສານແລະບົດລາຍງານ ເພື່ອແຈກໃຫ້ໂຄງການຍ່ອຍທີ່ໄດ້ຮັບການສະໜັບສະໜູນ ຈາກ ກປສ.
- ເຮັດເປັນສູນຂ່າວສານສິ່ງແວດລ້ອມທົ່ວໄປ (ເກັບຮັກສາຂ່າວສານໄວ້ແລະເອົາມາໃຊ້, ລະບົບຄຸ້ມຄອງຂ່າວສານ, ການຈັດພິມເຜີຍແຜ່).
- ໃຫ້ການສະໜັບສະໜູນໃນການຮຽນຮູ້ ແລະ ຕິດພັນກ່ຽວກັບການສ້າງຄວາມສາມາດ, ການພັດທະນາຊຸມຊົນ, ເຮັດການຕິດຕາມກວດກາ ແລະ ຕີລາຄາ.
- ເຮັດໜ້າທີ່ສ້າງເຄືອຂ່າຍ: ການຊອກຫາໂຄງການຍ່ອຍ, ສົ່ງເສີມ ແລະ ຈັດຕັ້ງກອງປະຊຸມ ເພື່ອແລກປ່ຽນທຶນຮອນ, ຄວາມຮູ້ ແລະ ຂ່າວສານ.

## ການສ້າງເວບໄຊ

ກປສ ຈະສ້າງແລະຈັດເວັບໄຊທາງການໃຫ້ທັນກັບສະພາບ ທັງເປັນພາສາລາວ ແລະ ພາສາອັງກິດ ເພື່ອເຜີຍແຜ່ການເຄື່ອນໄຫວຂອງ ກປສ ໃຫ້ແກ່ມວນຊົນຊາບ. ໂດຍສະເພາະ, ເວັບໄຊດັ່ງກ່າວ ຈະສັງລວມຂໍ້ມູນແລະລາຍລະອຽດ ຂອງໂຄງການແລະກິດຈະການທັງໝົດ ທີ່ໄດ້ຮັບທຶນຮອນຈາກ ກປສ, ລວມທັງ ບົດລາຍງານການເງິນປະຈຳປີ ທີ່ໄດ້ຮັບການກວດສອບແລ້ວ.

ເວັບໄຊດັ່ງກ່າວ ຍັງຈະສະໜອງຂໍ້ມູນກ່ຽວກັບການໃຫ້ການຊ່ວຍເຫຼືອທາງດ້ານການເງິນ ພ້ອມທັງເງື່ອນໄຂແລະບັນທັດຖານທີ່ກ່ຽວຂ້ອງ ແລະ ແບບຟອມຄຳຮ້ອງ ທີ່ສາມາດອັດເຂົ້າເຄື່ອງຄອມພິວເຕີໄດ້.

## ບົດລາຍງານຄວາມຄືບໜ້າ

ກປສ ຈະສ້າງແລະເຜີຍແຜ່ບົດລາຍງານຄວາມຄືບໜ້າຂອງວຽກງານຕາມໄລຍະທີ່ວາງໄວ້. ນອກນີ້, ກປສ ຍັງຈະຮັບຜິດຊອບເຮັດການຕິດຕາມກວດກາຈາກພາຍໃນແລະພາຍນອກ ເພື່ອໃຫ້ຄຳເຫັນທີ່ຈະເຮັດໃຫ້ການຈັດຕັ້ງປະຕິບັດກິດຈະການຂອງ ກປສ ໄດ້ຮັບຜົນສຳເລັດ. ບົດລາຍງານການຕິດຕາມກວດກາ ຈະລວມເຂົ້າໃນບົດລາຍງານປະຈຳປີ ແລະ ສຸດທ້າຍຈະໄດ້ສົ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ມີໄວ້ໃຫ້ມວນຊົນ ຫຼື ເອົາອອກໃນເວັບໄຊຂອງ ກປສ ແລະ ເຜີຍແຜ່ລົງໃນຈົດໝາຍຂ່າວສິ່ງແວດລ້ອມ.

## ການກວດສອບພາຍນອກທີ່ເອກກະລາດ

ຫ້ອງການບໍລິຫານກອງທຶນ ຈະຈັດຈ້າງບໍລິສັດກວດສອບເອກກະລາດ ເພື່ອມາເຮັດການກວດສອບ ເຊິ່ງຕ້ອງໃຫ້ສອດຄ່ອງກັບວິທີການແລະມາດຕະຖານການກວດສອບທີ່ຮັບຮູ້ກັນໃນສາກົນ. ການກວດສອບຕາມທຳມະດາ ຈະເຮັດໃນກາງເດືອນ 10 ເພື່ອເອົາຜົນສະຫຼຸບການເງິນທີ່ກວດສອບມານັ້ນ ມາສະເໜີຕໍ່ກອງປະຊຸມສະພາບໍລິຫານໃນເດືອນ 3.

ການກວດສອບດັ່ງກ່າວ ກວມເອົາການກວດສອບບັນຊີທະນາຄານຂອງ ກປສ, ການກວດສອບພາຍໃນ ແລະ ການດຳເນີນງານຂອງກອງທຶນຍ່ອຍ ທີ່ຫ້ອງການບໍລິຫານ ກປສ ຄຸ້ມຄອງ, ການກວດກາກິດຈະການລົງທຶນທີ່ຜູ້ຄຸ້ມຄອງຊັບສິນຂອງ ກປສ ເປັນຜູ້ເຮັດ

ແລະ ບັນດາວຽກງານການເງິນ ແລະ ການບໍລິຫານ ເຊິ່ງຜູ້ກວດສອບເຫັນວ່າມີຄວາມຈຳເປັນ.

ຫ້ອງການບໍລິຫານກອງທຶນ ຈະສະໜອງສຳເນົາບົດລາຍງານການກວດສອບວຽກງານປະຈຳປີ ໂດຍບໍ່ມີການເກັບຄ່າໃດໆ ໃຫ້ແກ່ບຸກຄົນ, ການຈັດຕັ້ງ ແລະ ອົງການຕ່າງໆທັງພາຍໃນ ແລະ ຕ່າງປະເທດທີ່ຂໍບົດລາຍງານດັ່ງກ່າວ. ຫ້ອງການບໍລິຫານກອງທຶນ ຍັງຈະສະໜອງສຳເນົາຂອງບົດລາຍງານການກວດສອບວຽກງານປະຈຳປີ 2 ສະບັບ ໂດຍບໍ່ມີການເກັບຄ່າ ໃຫ້ຫ້ອງວ່າການຂອງແຕ່ລະແຂວງ, ອີກ 2 ສະບັບໃຫ້ແກ່ ຫວຕສ ແລະ ອີກ 1 ສະບັບໃຫ້ແກ່ບຸກຄົນ ແລະ ການຈັດຕັ້ງທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານທຶນຮອນຈາກ ກປສ ໃນໄລຍະປີງົບປະມານທີ່ບົດລາຍງານດັ່ງກ່າວກວມເອົາ.

## ການກວດສອບພາຍໃນ

ຜູ້ກວດສອບພາຍໃນ ອາດຈະຖືກມອບໝາຍໃຫ້ທຳການກວດສອບແບບເອກະລາດສຳລັບບາງໂຄງການທີ່ໄດ້ຮັບການຊ່ວຍເຫຼືອຈາກ ກປສ ຕາມທີ່ຜູ້ອຳນວຍການຫ້ອງການບໍລິຫານກອງທຶນ ເຫັນວ່າມີຄວາມຈຳເປັນ. ການກວດສອບພາຍໃນ ຈະກວມເອົາການກວດສອບວຽກງານປະຈຳວັນ ຊຶ່ງແມ່ນດ້ານການເງິນ ລວມທັງການກວດສອບດ້ານດຳເນີນງານ.

ຜູ້ກວດສອບພາຍໃນ ຕ້ອງຮັກສາບົດບັນທຶກລະອຽດກ່ຽວກັບວຽກງານທັງໝົດທີ່ຕົນໄດ້ກວດສອບ. ຜູ້ກວດສອບ ລາຍງານໂດຍກົງໃຫ້ຜູ້ອຳນວຍການຫ້ອງການບໍລິຫານກອງທຶນ. ຜົນຂອງການກວດສອບ ຈະຕ້ອງໄດ້ນຳມາປຶກສາຫາລືກັບພະນັກງານຂອງພາກສ່ວນທີ່ໄດ້ຮັບການຊ່ວຍເຫຼືອ ເຊິ່ງວຽກງານຂອງຜູ້ກ່ຽວຖືກກວດສອບ ແລະ ຈາກນັ້ນຜົນຂອງການປຶກສາຫາລືດັ່ງກ່າວ ຈະໄດ້ເອົາເຂົ້າຢູ່ໃນບົດລາຍງານສຸດທ້າຍ.

## 5. ແຜນການຈັດຕັ້ງແລະການເງິນ

### 5.1. ແຜນປະກອບພະນັກງານ

ໂດຍລວມແລ້ວ, ຫ້ອງການ ກປສ ຈະຄັດເລືອກເອົາພະນັກງານຕາມບໍລິມາດວຽກແລະຈຳນວນກອງທຶນຍ່ອຍແລະໂຄງການທີ່ມີຢູ່. ໃນຊຸມປີທຳອິດ, ກປສ ໄດ້ຈັດຈ້າງເອົາທັງໝົດ 17 ຄົນ ໃນນັ້ນ 6 ຄົນ[2] ດ້ວຍງົບປະມານຂອງຫ້ອງການ ກປສ ແລະ ອີກ 11 ຄົນ[3] ດ້ວຍງົບປະມານຂອງໂຄງການສິ່ງແວດລ້ອມແລະສັງຄົມ. ນອກນີ້, ຍັງໄດ້ຈັດຈ້າງເອົາທີ່ປຶກສາສາກົນດ້ານເຕັກນິກແລະຄຸ້ມຄອງ ໃນໄລຍະ 2 ປີ ເພື່ອຊ່ວຍຫ້ອງການໃນການສ້າງຕັ້ງກອງທຶນໃຫ້ເຄື່ອນໄຫວໄດ້ດີ.

---

[2] ຊຶ່ງປະກອບດ້ວຍ ຜູ້ອຳນວຍການ ກປສ, ພະນັກງານຄຸ້ມຄອງ ແລະ ການເງິນ, ພະນັກງານວິຊາການ, ພະນັກງານຄຸ້ມຄອງເອກກະສານແລະຂ່າວສານມວນຊົນ, ພະນັກງານຊ່ວຍວຽກຫ້ອງການແລະຜູ້ຂັບລົດ. ລາຍລະອຽດ ຂອງໜ້າທີ່ຂອງພະນັກງານແລະເວລາຄັດເລືອກ ແມ່ນມີໃນຄູ່ມືປະຕິບັດງານ ກປສ.

[3] ຊຶ່ງປະກອບດ້ວຍ ຫົວໜ້າໂຄງການ, ຜູ້ຊ່ວຍຫົວໜ້າໂຄງການ, ພະນັກງານການເງິນ, ພະນັກງານບັນຊີ, ພະນັກງານຈັດຊື້/ຈັດຈ້າງ, ພະນັກງານເຕັກນິກ ດ້ານຈັດຕັ້ງປະຕິບັດນະໂຍບາຍແລະປັບປຸງຄວາມສາມາດ, ພະນັກງານເຕັກນິກ ດ້ານລົງທຶນໃສ່ຊຸມຊົນແລະຊີວະນາໆພັນ, ຜູ້ປະສານງານຢູ່ແຂວງຄຳມ່ວນ, ຜູ້ປະສານງານຢູ່ແຂວງບໍລິຄຳໄຊ, ຜູ້ປະສານງານຢູ່ແຂວງ ສະຫວັນນະເຂດ ແລະ ຜູ້ຂັບລົດ. ລາຍລະອຽດຂອງໜ້າທີ່ຂອງພະນັກງານແລະເວລາຄັດເລືອກ ແມ່ນມີໃນເອກກະສານ ຄສລ.

ຈຳນວນພະນັກງານທີ່ຈະຄັດເລືອກເຂົ້າມາເຮັດວຽກ ແມ່ນຂຶ້ນກັບບໍລິມາດວຽກແລະຈຳນວນຂອງກອງທຶນຍ່ອຍແລະໂຄງການ.

ຄາດວ່າໃນຕໍ່ໜ້າອັນໃກ້ໆນີ້, ຫ້ອງການ ກປສ ຈະໄດ້ຈັດຈ້າງເອົາພະນັກງານຕື່ມອີກ 3 ຄົນ ດ້ວຍງົບປະມານຂອງຕົນ ໃນທ້າຍປີ 2007.

## 5.2. ແຜນງົບປະມານທີ່ຄາດໄວ້

ແຜນງົບປະມານທີ່ຄາດໄວ້ໃນ 5 ປີຕໍ່ໜ້າ (2006-2010) ແມ່ນມີໃນຕາຕະລາງ 2. ມັນໄດ້ຊີ້ ໃຫ້ເຫັນວ່າງົບປະມານລວມທີ່ຄາດໄວ້ແມ່ນຈະເພີ້ມຂຶ້ນເປັນກ້າວໆ ຈາກ 1 ລ້ານໂດລາ ໃນໄລຍະເລີ້ມ ຕົ້ນ ສ່ວນໃນປີ 2010 ຄາດວ່າຈະມີປະມານ 2ລ້ານໂດລາ.

ນອກຈາກງົບປະມານຂອງຕົນທີ່ໄດ້ມາຈາກລາຍຮັບຂອງຕົ້ນທຶນທີ່ຕົນມີຢູ່ ແລະ ເງິນຊ່ວຍເຫຼືອລ້າແລ້ວ ກປສ ຍັງຄາດວ່າ ຈະໄດ້ຮັບການປະກອບສ່ວນຈຳນວນໜຶ່ງ ຈາກໂຄງການໄຟຟ້ານ້ຳຕົກ ທີ່ມີຢູ່ໃນປັດຈຸບັນທີ່ຈະຈັດຕັ້ງປະຕິບັດນະໂຍບາຍຂອງ ສປປລາວ ກ່ຽວກັບການພັດທະນາໄຟຟ້ານ້ຳຕົກແບບຍືນຍົງທາງດ້ານສິ່ງແວດລ້ອມແລະສັງຄົມ, ຈາກການຂຸດຄົ້ນບໍ່ແຮ່ ແລະ ອີກສ່ວນໜຶ່ງຈາກການປະກອບສ່ວນແບບສະໝັກໃຈຂອງຜູ້ພັດທະນາໂຄງການຕ່າງໆ. ລາຍຮັບ ທີ່ຄາດວ່າຈະໄດ້ຈາກຄ່າທຳນຽມສິ່ງແວດລ້ອມຂອງຂະແໜງໄຟຟ້ານ້ຳຕົກແລະບໍ່ແຮ່ ຈະໄດ້ວາງແຜນເພື່ອນຳໃຊ້ເຂົ້າໃນກອງທຶນຍ່ອຍຕ່າງໆ.

ຄວນສັງເກດອີກວ່າ, ໃນຖານະເປັນອົງການທີ່ບໍ່ຫວັງຜົນກຳໄລ, ຄ່າໃຊ້ຈ່າຍໃນແຜນງົບປະມານ 5ປີ ແມ່ນເທົ່າກັບລາຍໄດ້ແລະທຶນປະກອບສ່ວນທີ່ໄດ້ຮັບມາ. ຢ່າງໃດກໍດີ, ລາຍຈ່າຍໃນແຕ່ລະປີ ອາດບໍ່ຖືກກັບລາຍຮັບຕົວຈິງ ຍ້ອນການໂອນການເບີກຈ່າຍເງິນສຳລັບການຈັດ

ຕັ້ງປະຕິບັດໂຄງການຍ່ອຍໄປໃສ່ປີຕໍ່ໄປ. ພາຍຫຼັງທີ່ໄດ້ສ້າງຕັ້ງ ກປສ ແລ້ວ, ຄ່າບໍລິຫານໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ຄາດວ່າຈະບໍ່ເຖິງ 20%.

ສ່ວນການໝູນວຽນຂອງທຶນຮອນ ແມ່ນໄດ້ສະແດງອອກໃນຮູບ 2. ມັນໄດ້ຊີ້ໃຫ້ເຫັນແຫຼ່ງລາຍຮັບ ໄດ້ຝາກໄວ້ໃນບັນຊີທະນາຄານເປັນເງິນໂດລາຂອງ ກປສ ເອງ ແລະ ຝາກໄວ້ໂດຍກົງໃນບັນຊີພິເສດຂອງກອງທຶນຍ່ອຍ. ຂັ້ນຕອນ ຄຸ້ມຄອງ ແລະເບີກຈ່າຍ ແມ່ນມີໃນຄູ່ມືຂອງ ກປສ ສະບັບທຳອິດ. ໃນຊຸມປີທຳອິດ, ຫຼັກການດັ່ງກ່າວ ອາດມີການປັບປຸງຕື່ມ.

### ເອກະສານຂັດຕິດ 2. ແຜນງົບປະມານທີ່ຄາດໄວ້ສຳລັບ 5 ປີ 2006-2010

| ປະເພດ | ເນື້ອໃນລະອຽດ | 2006 | 2007 | 2008 | 2009 | 2010 | | ລວມ |
|---|---|---|---|---|---|---|---|---|
| **ຊັບສິນໄລຍະຍາວຂອງ ກປສ** | | | | | | | | |
| ທຶນຂອງ ກປສ | ຕົ້ນທຶນຂອງ ກປສ | $5,700 | $5,700 | $5,700 | $5,700 | $5,700 | | $5,700 |
| | ອື່ນໆ | $ | $ | $ | $ | $ | + | $ |
| **ລວມຊັບສິນໄລຍະຍາວຂອງ ກປສ** | | $5,700 | $5,700 | $5,700 | $5,700 | $5,700 | | $5,700 |
| **ລາຍຮັບ:** | | | | | | | | |
| ລາຍຮັບຈາກ ຕົ້ນທຶນ | ຄ່າບໍລິຫານຫ້ອງການ | $50 | $125 | $150 | $200 | $250 | | $775 |
| | ຄ່າຄຸ້ມຄອງໂຄງການຍ່ອຍ | $ | $125 | $100,000 | $50 | $ | + | $275 |
| ລວມລາຍຮັບ: | | $50 | $250 | $250 | $250 | $250 | | $1,050 |

| | | | | | | | | |
|---|---|---|---|---|---|---|---|---|
| ເງິນຊ່ວຍເຫຼືອລ້າ | ກອງທຶນຍ່ອຍໃນ ຄສລ | $200 | $800 | $1,000 | $1,000 | $1,000 | | $4,000 |
| | ຄ່າຄຸ້ມຄອງກອງທຶນຍ່ອຍ | $ | $ | $250 | $500 | $500 | | $1,250 |
| | ເງິນຊ່ວຍເຫຼືອລ້າອື່ນໆ | $ | $ | $ | $ | $ | + | $ |
| ລວມເງິນຊ່ວຍເຫຼືອລ້າ | | $200 | $800 | $1,250 | $1,500 | $1,500 | | $5,250 |
| ລາຍຮັບອື່ນໆ: | ຄ່າທຳນຽມສິ່ງແວດລ້ອມ (ໄຟຟ້າ/ ບໍ່ແຮ່) | $ | $ | $ | $200 | $200 | | $400 |
| | ອື່ນໆ | $ | $ | $ | $ | $ | + | $ |
| ລວມລາຍຮັບອື່ນໆ: | | $ | $ | $ | $200 | $200 | | $400 |

| | | | | | | | | |
|---|---|---|---|---|---|---|---|---|
| **ລວມລາຍຮັບສຳລັບການເຄື່ອນໄຫວ:** | | **$250** | **$1,050** | **$1,500** | **$1,950** | **$1,950** | | **$6,700** |
| **ລາຍຈ່າຍ:** | | | | | | | | |
| ລາຍຈ່າຍສຳລັບການເຄື່ອນໄຫວ | ຫ້ອງການ ກປສ (ນອກຈາກກອງທຶນຍ່ອຍ) | $50 | $125 | $150 | $200 | $250 | | $775 |
| | ກອງທຶນຍ່ອຍໃນຄສລ | $100 | $218 | $218 | $200 | $200 | | $936 |
| | ຄ່າຄຸ້ມຄອງທຶນຊ່ວຍເຫຼືອຈາກຕ່າງປະເທດຂອງຫ້ອງການ | $ | $ | $50 | $140 | $140 | | $330 |
| | ກອງທຶນ ຍ່ອຍ | $ | $ | $ | $ | $ | + | $ |
| **ລວມລາຍຈ່າຍສຳລັບການເຄື່ອນໄຫວ** | | $150 | $343 | $418 | $540 | $590 | | $2,041 |

| | | | | | | | | |
|---|---|---|---|---|---|---|---|---|
| ໂຄງການຍ່ອຍ: | ຄ່າຄຸ້ມຄອງກອງທຶນຍ່ອຍ | $ | $125 | $300 | $610 | $560 | | $1,595 |
| | ກອງທຶນຍ່ອຍ "ນະໂຍບາຍ" | $ | $259 | $350 | $450 | $450 | | $1,509 |
| | ກອງທຶນຍ່ອຍ "ຊີວະນາໆພັນ" | $ | $250 | $405 | $450 | $450 | | $1,555 |
| | ກອງທຶນຍ່ອຍອື່ນໆ | $ | $ | $ | $ | $ | + | $ |
| | **ລວມໂຄງການຍ່ອຍ:** | $ | $634 | $1,055 | $1,510 | $1,460 | | $4,659 |
| | **ລວບມລາຍຈ່າຍ:** | **$150** | **$977** | **$1,473** | **$2,050** | **$2,050** | | **$6,700** |
| **ສະຫຼຸບລາຍຮັບ-ລາຍຈ່າຍປະຈຳປີ:** | | **$100** | **$73** | **$27** | **$(100)** | **$(100)** | | **$** |

ຮູບ 3. ຮູບກະແສໝູນວຽນຂອງທຶນຮອນ



**http://www.laoepf.org.la**


**ຂໍ້ມູນເພີ້ມເຕີມໄດ້ທີ່:**

ຊັ້ນ 3, ຕຶກ ອອຕສ, ຖະໜົນສີດຳດວນ

ສຳນັກງານນາຍົກລັດຖະມົນຕີ

ນະຄອນຫຼວງວຽງຈັນ

ໂທ: 021 252739

ແຟັກ: 021 252741

ເວບໄຊ: http://www.laoepf.org.la